ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງລະບົບຊໍາລະສະສາງ

ເລກທີ 649 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2020

# ແຈ້ງການ

**ເຖິງ:** ທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ນິຕິບຸກຄົນທີ່ຢູ່ ສປປ ລາວ.
**ເລື່ອງ:** ການກໍານົດຍອດເງິນຮັບລ່ວງໜ້າໃນການໃຫ້ບໍລິການເງິນເອເລັກໂຕຣນິກ.

- ອີງຕາມ ກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງລະບົບຊໍາລະສະສາງ ສະບັບເລກທີ 959/ທຫລ, ລົງວັນທີ 18 ກັນຍາ 2017.

ກົມຄຸ້ມຄອງລະບົບຊໍາລະສະສາງ ທະນາຄານແຫ່ງ ສປປ ລາວ ອອກແຈ້ງການກ່ຽວກັບ ການກໍານົດຍອດເງິນຮັບລ່ວງໜ້າໃນການໃຫ້ບໍລິການເງິນເອເລັກໂຕຣນິກ ຕາມທີ່ກໍານົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020 ດັ່ງນີ້:

| ລ/ດ | ຮູບແບບການອະນຸຍາດ | ຍອດເງິນຮັບລ່ວງໜ້າ (ຕື້ກີບ) | ຂອບເຂດ ແລະ ເງື່ອນໄຂ ການໃຫ້ບໍລິການ |
|---|---|---|---|
| 1 | ການບໍລິການທີ່ຕ້ອງໄດ້ຮັບ **ໃບອະນຸຍາດ** | ບໍ່ຈໍາກັດຍອດເງິນຮັບລ່ວງໜ້າ | ການໃຫ້ບໍລິການ ຢ່າງກວ້າງຂວາງ, ແຜ່ຫຼາຍ ແລະ ມີຜົນກະທົບ ທັງພາຍໃນ ແລະ ຕ່າງປະເທດ ແລະ ເງື່ອນໄຂການໃຫ້ບໍລິການ ຕາມທີ່ກໍານົດໄວ້ໃນມາດຕາ 14, 15 ແລະ 20 ຂອງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ. |
| 2 | ການບໍລິການທີ່ຕ້ອງຮັບ **ໃບຢັ້ງຢືນ** | ຍອດເງິນຮັບລ່ວງໜ້າສະເລ່ຍ ຫົກເດືອນຍ້ອນຫລັງແຕ່ **ຫ້າຕື້ກີບຂຶ້ນໄປ** | ການໃຫ້ບໍລິການ ເພື່ອສະໜັບສະໜູນທຸລະກິດຂອງຕົນເອງ ແລະ ເງື່ອນໄຂການໃຫ້ບໍລິການຕາມທີ່ກໍານົດໄວ້ໃນມາດຕາ 17 ແລະ 18 ຂອງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ. |
| 3 | ການບໍລິການທີ່ຕ້ອງແຈ້ງໃຫ້ ກົມຄຸ້ມຄອງລະບົບຊໍາລະສະສາງຊາບ ທີ່ຕ້ອງໄດ້ຮັບ **ໃບຮັບຮູ້** | ຍອດເງິນຮັບລ່ວງໜ້າສະເລ່ຍຫົກເດືອນຍ້ອນຫຼັງ **ບໍ່ເກີນຫ້າຕື້ກີບ** | ການໃຫ້ບໍລິການໃນວົງແຄບ, ບໍ່ມີຜົນກະທົບໃນວົງກວ້າງ ແລະ ໃຫ້ບໍລິການສະເພາະພາຍໃນປະເທດ ຊຶ່ງມີລັກສະນະ ແລະ ເງື່ອນໄຂການໃຫ້ບໍລິການ ຕາມທີ່ກໍານົດໄວ້ໃນມາດຕາ 19 ແລະ 20 ຂອງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ. |

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ການໃຫ້ບໍລິການເງິນເອເລັກໂຕຣນິກທີ່ນອນຢູ່ໃນເງື່ອນໄຂຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນີ້ ໂດຍສະເພາະແມ່ນຜູ້ໃຫ້ບໍລິການຊໍາລະທີ່ໄດ້ດໍາເນີນທຸລະກິດກ່ອນ ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ປະກາດໃຊ້ ເຊັ່ນ: ການອອກບັດເພື່ອເກັບເງິນໄວ້ (Store Value Card) ເພື່ອຊື້ສິນຄ້າ ຫຼື ຊໍາລະຄ່າບໍລິການຂອງຕົນເຊັ່ນ: ປໍ້ານໍ້າມັນ, ຮ້ານກາເຟ, ແລະ ອື່ນໆ ຕ້ອງຍື່ນໜັງສືສະ ເໜີ ຫຼື ລາຍງານ ຕາມແຕ່ລະປະເພດ ມາຍັງ ກົມຄຸ້ມຄອງລະບົບຊໍາລະສະສາງ ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາຮູບແບບການອະນຸຍາດການໃຫ້ບໍລິການຊໍາລະ ໃຫ້ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກໍານົດໃນມາດຕາ12 ຂອງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ຢ່າງເຂັ້ມງວດ.

ກໍລະນີທຸລະກິດໃດທີ່ຕິດພັນກັບການໃຫ້ບໍລິການດັ່ງກ່າວ ມີຍອດເງິນຮັບລ່ວງໜ້າເກີນຕາມທີ່ກໍານົດໃນແຈ້ງການສະບັບນີ້ ຜູ້ໃຫ້ບໍລິການເງິນເອເລັກໂຕຣນິກ ຕ້ອງລາຍງານມາຍັງ ກົມຄຸ້ມຄອງລະບົບຊໍາລະສະສາງ ພາຍໃນ ສິບຫ້າວັນລັດຖະການ (15 ວັນ) ນັບແຕ່ວັນທີ່ຮັບຮູ້ຍອດເງິນຮັບລ່ວງໜ້າເກີນຂອງທຸລະກິດຕົນ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມ

ສຸລິສັກ ທໍາບຸວົງ